ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ກົມປ່າໄມ້

ເລກທີ: 2201 /ກປມ.

ລົງວັນທີ : 01 DEC 2009

# ຂໍ້ຕົກລົງ

## ວ່າດ້ວຍ ພາລະບົດບາດ

## ຂອງການຈັດຕັ້ງ ຄຸ້ມຄອງ ການຍົ້ງຢືນປ່າໄມ້

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບທີ 59/ນຍ, ລົງວັນທີ 22/5/2002, ວ່າດ້ວຍ ການຄຸ້ມຄອງ ປ່າຜະລິດແບບຍືນນານ.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ສະບັບເລກທີ 1060/ກປ, ລົງວັນທີ 23 ຕຸລາ 2007, ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມປ່າໄມ້.

ກົມປ່າໄມ້ ຕົກລົງ:

## ໝວດທີ I.

## ວ່າດ້ວຍທີ່ຕັ້ງ ແລະ ພາລະບົດບາດ.

ມາດຕາ1. ການຈັດຕັ້ງ ຄຸ້ມຄອງການຍົ້ງຢືນປ່າໄມ້ ແມ່ນການຈັດຕັ້ງ ສັງກັດໃນກົງຈັກການຈັດຕັ້ງຂອງຂະແໜງການປ່າໄມ້ ປະກອບມີ: ໜ່ວຍງານຄຸ້ມຄອງ ການຍົ້ງຢືນປ່າໄມ້ ຂອງ ກົມປ່າໄມ້; ໜ່ວຍງານຄຸ້ມຄອງປ່າຜະລິດ ແລະ ທຸລະກິດໄມ້ ຂອງຂະແໜງປ່າໄມ້ ແຂວງ; ໜ່ວຍຄຸ້ມຄອງປ່າຜະລິດ ຂອງເມືອງ; ແລະ ການຈັດຕັ້ງປ່າໄມ້ບ້ານ ເຂດທີ່ໄດ້ຮັບການຍົ້ງຢືນປ່າໄມ້. ການຈັດຕັ້ງດັ່ງກ່າວ ມີບົດບາດໃນການ ຈັດຕັ້ງຄຸ້ມຄອງ ວຽກງານຍົ້ງຢືນປ່າໄມ້ທຳ ມະຊາດ, ການຍົ້ງຢືນສວນປູກໄມ້ ແລະ ເຄື່ອງປ່າຂອງດົງ ຕາມລະບຽບກົດໝາຍ ແລະ ຫລັກການ ຍົ້ງຢືນປ່າໄມ້ ຂອງສະພາບໍລິຫານປ່າໄມ້.

## ໝວດທີ II.

## ວ່າດ້ວຍໜ້າທີ່ ແລະ ຄວາມຮັບຜິດຊອບ

**ມາດຕາ 2. ໜ້າທີ່ ແລະ ຄວາມຮັບຜິດຊອບຕົ້ນຕໍ ຂອງການຈັດຕັ້ງ ຄຸ້ມຄອງຍົ້ງຢືນປ່າໄມ້**

*2.1 ໜ່ວຍງານຄຸ້ມຄອງ ການຍົ້ງຢືນປ່າໄມ້*

1. ຊີ້ນຳ ໜ່ວຍງານ ຮັບຜິດຊອບ ວຽກງານຍົ້ງຢືນປ່າໄມ້ ຂັ້ນແຂວງ, ເມືອງ ແລະ ບ້ານ ໃນການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງປ່າໄມ້, ການປູກໄມ້ ແລະ ເຄື່ອງປ່າຂອງດົງ

ຕາມລະບົບແບບຍືນນານ ຕາມລະບຽບກົດໝາຍ ແລະ ຕາມຫຼັກການ, ມາດຖານ ຂອງສະພາບໍລິຫານປ່າໄມ້;

2. ກຳນົດແຜນງານ ກ່ຽວກັບ ການຄຸ້ມຄອງ ການຢັ້ງຢືນ ປ່າໄມ້, ການປູກໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ສອດຄ່ອງຕາມມາດຖານ ແລະ ຫຼັກການ ຂອງ ສະພາບໍລິຫານປ່າໄມ້;
3. ດຳເນີນການຕິດຕາມກວດກາ ການຈັດຕັ້ງຄຸ້ມຄອງຈັດສັນປ່າໄມ້, ສວນປູກໄມ້ ຜະລິດ ແລະ ຊຸກຍູ້ການຢັ້ງ ຢືນປ່າໄມ້ທຳມະຊາດ, ສວນປູກໄມ້ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ ໃນຂອບເຂດທົ່ວປະເທດ. ກວດສອບ ການຂໍເຂົ້າເປັນ ສະມາຊິກ ກຸ່ມຢັ້ງຢືນປ່າໄມ້;
4. ຕິດຕໍ່ພົວພັນ ກັບ ອົງການຢັ້ງຢືນປ່າໄມ້ SmartWood, ປະສານງານ ກ່ຽວກັບການກວດກາ ແລະ ເກັບຮັກສາ ເອກກະສານຕ່າງໆ ກ່ຽວກັບວຽກງານຢັ້ງຢືນປ່າໄມ້;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດແຜນຄຸ້ມຄອງເຂດຈັດສັນປ່າຜະລິດ, ສວນປູກໄມ້ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ ໂດຍຖືເອົາການຄຸ້ມຄອງແບບຍືນນານ ເປັນພື້ນຖານ ໃນການນຳໃຊ້ຊັບພະຍາກອນປ່າໄມ້ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສະເພາະແມ່ນແຜນງານລຶບລ້າງ ຄວາມທຸກຍາກແຫ່ງຊາດ;
6. ຝຶກອົບຮົມທາງດ້ານວິຊາການ ແລະ ໜ່ວຍງານຊີ້ນຳໜ່ວຍຄຸ້ມຄອງປ່າຜະລິດ ແລະ ທຸລະກິດໄມ້ ຂອງແຂວງ, ເມືອງ ແລະ ການຈັດຕັ້ງປ່າໄມ້ບ້ານ ໃນການຈັດຕັ້ງຄຸ້ມຄອງເຂດຈັດສັນປ່າໄມ້, ສວນປູກໄມ້ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ ຕາມລະບົບຍືນນານ ແລະ ຕາມຫລັກການຢັ້ງຢືນປ່າໄມ້;
7. ຜັນຂະຫຍາຍ, ເຜີຍແຜ່ຜົນຂອງການຢັ້ງຢືນປ່າໄມ້ທຳມະຊາດ, ປ່າປູກ ແລະ ເຄື່ອງປ່າຂອງດົງ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຮັບຮູ້ ແລະ ເຫັນໄດ້ຄວາມໝາຍສຳຄັນ ແລະ ເຂົ້າຮ່ວມໃນການຄຸ້ມຄອງຊັບພະຍາກອນປ່າໄມ້ແບບຍືນນານ ແລະ ກ້າວເຂົ້າສູ່ການຢັ້ງຢືນປ່າໄມ້;
8. ໂຄສະນາເຜີຍແຜ່ຜະລິດຕະພັນປ່າໄມ້ທີ່ໄດ້ຮັບການຢັ້ງຢືນຈາກອົງການຢັ້ງຢືນປ່າໄມ້ ຕໍ່ຂະແໜງການທີ່ກ່ຽວຂ້ອງ, ອົງການຈັດຕັ້ງສາກົນ, ນັກທຸລະກິດພາຍໃນ ແລະ ຕ່າງປະເທດໃຫ້ເຫັນໄດ້ຄວາມສຳຄັນແລ້ວພ້ອມກັນຊອກຫາແຫຼ່ງທຶນເພື່ອນຳໃຊ້ເຂົ້າໃນການດຳເນີນການຄຸ້ມຄອງປ່າໄມ້, ການປູກໄມ້, ເຄື່ອງປ່າຂອງດົງ ແລະ ການຢັ້ງຢືນປ່າໄມ້ ແລະ
9. ກຳນົດ ລະບົບການຕິດຕາມ ແລະ ກວດກາ ໜ່ວຍງານ ຮັບຜິດຊອບ ວຽກງານຢັ້ງຢືນປ່າໄມ້ ຂັ້ນແຂວງ, ເມືອງ ແລະ ບ້ານ ປະຕິບັດວຽກງານຢັ້ງຢືນປ່າໄມ້ ຕາມລະບຽບກົດໝາຍ ແລະ ຕາມຫລັກການ, ມາດຖານ ຂອງສະພາບໍລິຫານປ່າໄມ້ ຕາມທີ່ລະບຸໄວ້ໃນມາດຕາ3.

## 2.2 ໜ່ວຍງານຄຸ້ມຄອງປ່າຜະລິດ ແລະ ທຸລະກິດໄມ້ ຂອງຂະແໜງປ່າໄມ້

1. ຈັດຕັ້ງປະຕິບັດ ການຄຸ້ມຄອງປ່າຜະລິດ, ສວນປູກໄມ້ ແລະ ເຄື່ອງປ່າຂອງດົງຕາມລະບຽບກົດໝາຍ ແລະ ມາດຖານ ຂອງສະພາບໍລິຫານປ່າໄມ້;
2. ຊີ້ນຳ ໜ່ວຍຄຸ້ມຄອງເຂດປ່າຜະລິດຂອງເມືອງໃນການສ້າງແຜນດຳເນີນປະຈຳປີ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງເຂດຈັດສັນປ່າຜະລິດ ແບບມີສ່ວນຮ່ວມໃນແຕ່ລະໄລຍະ.
3. ສັງລວມແຜນການດຳເນີນງານ ແລະ ແຜນການຂຸດຄົ້ນປະຈຳປີຂອງໜ່ວຍຄຸ້ມຄອງເຂດປ່າຜະລິດທັງໝົດພາຍໃນແຂວງ ເພື່ອເປັນຂໍ້ມູນໃຫ້ຂະແໜງປ່າໄມ້ແຂວງໃນການນຳສະເໜີຂໍອະນຸມັດຈາກລັດຖະບານໃຫ້ຖືກຕ້ອງຕາມຂັ້ນຕອນ.
4. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມການຂຸດຄົ້ນຊັບພະຍາກອນປ່າໄມ້ໃນເຂດຈັດສັນປ່າຜະລິດພາຍໃນແຂວງຕາມແຜນການທີ່ໄດ້ຮັບອະນຸມັດຈາກລັດຖະບານໃຫ້ຖືກຕ້ອງຕາມລະບຽບຂອງກະຊວງກະສິກຳ ແລະ ປ່າໄມ້ສະບັບທີ 0221/ກປ.2000, ລົງວັນທີ 13/10/2000, ວ່າດ້ວຍການຄຸ້ມຄອງການຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້.
5. ເຂົ້າຮ່ວມໃນການຂາຍໄມ້ ແລະ ຜະລິດຕະພັນປ່າໄມ້ທີ່ຂຸດຄົ້ນອອກຈາກເຂດຈັດສັນປ່າຜະລິດ, ແບ່ງປັນ ແລະ ຄຸ້ມຄອງການນຳໃຊ້ລາຍຮັບທີ່ໄດ້ຈາກສ່ວນເກີນໃນການຂາຍໄມ້ ແລະ ຜະລິດປ່າໄມ້ໃຫ້ຖືກຕ້ອງ ຕາມລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້ເລກທີ 0204/ກປ, ລົງວັນທີ 3/10/2003, ມາດຕາ18, ວ່າດ້ວຍການແບ່ງປັນລາຍຮັບຈາກການຂາຍໄມ້ທີ່ຂຸດຄົ້ນຢູ່ໃນເຂດປ່າຜະລິດ.
6. ຄຸ້ມຄອງລະບົບບັນຊີ-ການເງິນ ແລະ ຈັດສັນງົບປະມານປະຈຳປີເພື່ອຮັບປະກັນດ້ານດຳເນີນກິດຈະກຳການຈັດສັນປ່າໄມ້.
7. ຍົກລະດັບຄວາມຮູ້ຄວາມສາມາດກ່ຽວກັບການຄຸ້ມຄອງຈັດສັນປ່າຜະລິດ ແລະ ວຽກງານການຢັ້ງຢືນປ່າໄມ້ໃຫ້ໜ່ວຍຄຸ້ມຄອງເຂດປ່າຜະລິດຂອງເມືອງ ແລະ ການຈັດຕັ້ງປ່າໄມ້ຂອງບ້ານ.
8. ກວດກາຊຸກຍູ້ ແລະ ປະເມີນຜົນການດຳເນີນວຽກງານຄຸ້ມຄອງປ່າຜະລິດ ແລະ ການຢັ້ງຢືນປ່າໄມ້ຂອງໜ່ວຍຄຸ້ມຄອງເຂດປ່າຜະລິດຂອງເມືອງ ແລະ ການຈັດຕັ້ງປ່າໄມ້ຢ່າງເປັນປົກກະຕິ;
9. ຄຸ້ມຄອງຮັກສາບັນດາເອກະສານ, ຂໍ້ມູນຂ່າວສານກ່ຽວກັບການເຄື່ອນໄຫວວຽກງານປ່າໄມ້ໃນເຂດຈັດສັນປ່າຜະລິດເຂດທີ່ໄດ້ຮັບການຢັ້ງຢືນປ່າໄມ້ຢ່າງເປັນລະບົບ.

## 2.3. ໜ່ວຍຄຸ້ມຄອງເຂດປ່າຜະລິດເມືອງ

1. ຈັດຕັ້ງປະຕິບັດ ການຄຸ້ມຄອງປ່າຜະລິດ, ສວນປູກໄມ້ ແລະ ເຄື່ອງປ່າຂອງດົງຕາມລະບຽບກົດໝາຍ ແລະ ມາດຖານ ຂອງສະພາບໍລິຫານປ່າໄມ້;

2. ປະຕິບັດຕາມ ລະບຽບການກະຊວງກະສິກຳ ແລະ ປ່າໄມ້ເລກທີ 0204/ກປ, ລົງວັນທີ 3/10/2003, ມາດຕາ 28 ວ່າດ້ວຍສິດ ແລະ ໜ້າທີ່ຂອງໜ່ວຍຄຸ້ມຄອງເຂດປ່າຜະລິດແບບຍືນນານ.
3. ສ້າງແຜນດຳເນີນງານປະຈຳປີສະເພາະເຂດປ່າຜະລິດຂອງເມືອງຮ່ວມກັບການຈັດຕັ້ງປ່າໄມ້ບ້ານ ແລ້ວສະເໜີຕໍ່ໜ່ວຍງານປ່າໄມ້ເມືອງ ແລະ ຂະແໜງປ່າໄມ້ພິຈາລະນາ.
4. ຈັດແບ່ງ ແລະ ຄຸ້ມຄອງການນຳໃຊ້ລາຍຮັບຈາກການຂາຍໄມ້ທີ່ຂຸດຄົ້ນອອກຈາກເຂດປ່າຜະລິດຕາມມາດຕາ 18 ຂອງລະບຽບການ ເລກທີ 0204/ກປ, ລົງວັນທີ 3/10/2003.
5. ຕິດຕາມ, ຊຸກຍູ້ ແລະ ປະເມີນຜົນ ການດຳເນີນວຽກງານຄຸ້ມຄອງປ່າຜະລິດ ແລະ ການຍັ້ງຢືນປ່າໄມ້ໃນຂອບເຂດເມືອງຢ່າງເປັນປົກກະຕິ.
6. ຈັດຕັ້ງ ແລະ ເຜີຍແຜ່ລະບຽບຄຸ້ມຄອງຊັບພະຍາກອນປ່າໄມ້ຂອງລັດເປັນຕົ້ນແມ່ນກົດໝາຍ ປ່າໄມ້, ດຳລັດ, ຄຳສັ່ງ ແລະ ລະບຽບການ ໃຫ້ອຳນາດການປົກຄອງບ້ານ ແລະ ການຈັດຕັ້ງປ່າໄມ້ບ້ານຮັບຊາບ.
7. ຄຸ້ມຄອງຮັກສາບັນດາເອກະສານ, ຂໍ້ມູນຂ່າວສານກ່ຽວກັບການເຄື່ອນໄຫວວຽກງານປ່າໄມ້ໃນເຂດຈັດສັນປ່າຜະລິດຂອງເມືອງຢ່າງເປັນລະບົບ.

### *2.4. ການຈັດຕັ້ງປ່າໄມ້ບ້ານ*

1. ປະຕິບັດຕາມ ລະບຽບຂອງກະຊວງກະສິກຳ ແລະ ປ່າໄມ້ເລກທີ 0204/ກປ, ລົງວັນທີ 3/10/2003, ມາດຕາ 29 ວ່າດ້ວຍສິດ ແລະ ໜ້າທີ່ຂອງການຈັດຕັ້ງປ່າໄມ້ຂອງບ້ານ.
2. ເຂົ້າຮ່ວມການສ້າງແຜນຈັດສັນປ່າຜະລິດຂອງເມືອງໂດຍສະເພາະແມ່ນເຂດຄຸ້ມຄອງປ່າຜະລິດເຂດຫຍ່ອຍ ແລະ ແຜນການດຳເນີນງານປະຈຳປີ.
3. ກະກຽມເງື່ອນໄຂ ເພື່ອຈັດຕັ້ງປະຕິບັດແຜນການດຳເນີນງານປະຈຳປີ ເພື່ອປຶກສາຫາລືເປັນເອກະພາບກັບໜ່ວຍວິຊາການຄຸ້ມຄອງເຂດປ່າຜະລິດຂອງເມືອງ.
4. ຈັດຕັ້ງປະຕິບັດແຜນການດຳເນີນງານປະຈຳປີ ຢູ່ໃນເຂດຄຸ້ມຄອງປ່າຜະລິດ ພາຍໃຕ້ການແນະນຳ ແລະ ຕິດຕາມຂອງໜ່ວຍຄຸ້ມຄອງເຂດປ່າຜະລິດຂອງເມືອງ.
5. ຂຶ້ນແຜນການນຳໃຊ້ລາຍຮັບຈາກສ່ວນແບ່ງການຂາຍໄມ້ທີ່ຂຸດຄົ້ນອອກຈາກປ່າ ຜະລິດຕາມມາດຕາ 18 ຂອງລະບຽບການເລກທີ 0204/ກປ, ລົງວັນທີ 03/10/2003.
6. ເຜີຍແຜ່ໜ້າທີ່ຂອງອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນພາຍໃນບ້ານໃນການປົກປັກຮັກສາຄຸ້ມຄອງຊັບພະຍາກອນປ່າໄມ້ແບບຍືນນານ ກໍ່ຄືການຈັດຕັ້ງປະຕິບັດແຜນການດຳເນີນງານປະຈຳປີໃນເຂດປ່າຜະລິດຕາມແຜນຈັດສັນປ່າແບບຍືນນານ.
7. ເກັບຮັກສາບັນດາຂໍ້ມູນຂ່າວສານກ່ຽວກັບການເຄື່ອນໄຫວວຽກງານປ່າໄມ້ໃນເຂດຈັດສັນປ່າຜະລິດທີ່ຕົນຮັບຜິດຊອບ.

ມາດຕາ 3. ຫຼັກການ ຍືນຍົງປ່າໄມ້ ຂອງສະພາບໍລິຫານປ່າໄມ້

*ຫຼັກການທີ 1: ຄວາມສອດຄ່ອງກັບກົດໝາຍ, ລະບຽບການ ແລະ ຫຼັກການຄຸ້ມຄອງປ່າໄມ້ຂອງສາກົນ.*

ການຄຸ້ມຄອງຈັດສັນປ່າໄມ້ ຕ້ອງໄດ້ຈັດຕັ້ງປະຕິບັດຕາມກົດໝາຍ ແລະ ລະບຽບ ຂອງລັດ, ທັງສອດຄ່ອງກັບສົນທິສັນຍາ ແລະ ຂໍ້ຕົກລົງສາກົນທີ່ປະເທດຂອງຕົນໄດ້ລົງນາມ ແລະ ພ້ອມດຽວກັນກໍ່ຕ້ອງສອດຄ່ອງກັບຫຼັກການ ຄຸ້ມຄອງປ່າໄມ້ຂອງພາກພື້ນ ແລະ ສາກົນ.

*ຫຼັກການທີ 2: ສິດຊົມໃຊ້ຊັບພະຍາກອນປ່າໄມ້ຕາມຮີດຄອງປະເພນີຂອງປະຊາຊົນ*

ສິດເປັນເຈົ້າຂອງປະຊາຊົນໃນທ້ອງຖິ່ນກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ໄລຍະຍາວຈະຕ້ອງໄດ້ຖືກກຳນົດເປັນແນວທາງຢ່າງຈະແຈ້ງ.

*ຫຼັກການທີ 3: ສິດໃນການເຊື່ອຖື ແລະ ຮີດຄອງປະເພນີຂອງປະຊາຊົນບັນດາເຜົ່າ*

ຮັບຮູ້ ແລະ ນັບຖື ສິດດ້ານກົດໝາຍ ແລະ ສິດຕາມປະເພນີຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ ແລະ ຊັບພະຍາກອນປ່າໄມ້.

*ຫຼັກການທີ 4: ສິດທີ່ພົວພັນເຖິງສັງຄົມ ແລະ ສິດຂອງຜູ້ອອກແຮງງານ*

ກິດຈະການຄຸ້ມຄອງປ່າໄມ້ ຕອ້ງໄດ້ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມໄລຍະຍາວຂອງທ້ອງຖິ່ນ.

*ຫຼັກການທີ 5: ຜົນປະໂຫຍດຈາກປ່າໄມ້*

ກິດຈະການຄຸ້ມຄອງປ່າ ຕ້ອງແນໃສ່ການບໍລິການ ແລະ ການໃຊ້ຜະລິດຕະພົນປ່າໄມ້ ຢ່າງມີປະສິດທິຜົນ ເພື່ອຮັບປະກັນຜົນປະໂຫຍດທາງດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມ.

*ຫຼັກການທີ 6: ຜົນກະທົບດ້ານສິ່ງແວດລ້ອມ*

ການຄຸ້ມຄອງປ່າໄມ້ ຕ້ອງຊຸກຍູ້ໃຫ້ແກ່ ການປົກປັກຮັກສາຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ, ຊັບພະຍາກອນ ນ້ຳ, ດິນ, ທັດສະນີຍະພາບ ແລະ ພ້ອມດຽວກັນກໍເປັນການບູລະນະຮັກສາດ້ານລະບົບນິເວດຂອງປ່າໄມ້ ນຳດ້ວຍ.

*ຫຼັກການທີ 7: ແຜນຄຸ້ມຄອງຈັດສັນປ່າໄມ້*

ແຜນການຄຸ້ມຄອງຈັດສັນປ່າໄມ້ຕ້ອງຕອບສະໜອງໄດ້ຈຸດປະສົງໄລຍະຍາວ, ມີການກຳນົດຜົນໄດ້ຮັບຢ່າງຈະແຈ້ງ, ມີຄວາມສອດຄ່ອງກັບສະພາບຄວາມເປັນຈິງ, ມີການຈັດພິມ ອອກເປັນເອກະສານອ້າງອີງ, ມີການຈັດຕັ້ງປະຕິບັດ ແລະ ມີການປັບປຸງເປັນແຕ່ລະໄລຍະ.

*ຫຼັກການທີ 8: ການຕິດຕາມກວດກາ ແລະ ປະເມີນຜົນ*

ການຕິດຕາມ ກວດກາຕ້ອງໄດ້ ດຳເນີນເປັນປົກກະຕິ. ໃນການຕິດຕາມກວດການັ້ນຕ້ອງປະເມີນສະພາບຂອງປ່າໄມ້; ຜົນທີ່ໄດ້ຮັບຈາກປ່າໄມ້; ການປະຕິບັດ ຂັ້ນຕອນການເຄື່ອນຍ້າຍຜະລິດຕະພົນທີ່ໄດ້ຈາກປ່າໄມ້; ການປະເມີນການຄຸ້ມຄອງກິດຈະກຳ ລວມທັງຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ເສດຖະກິດສັງຄົມໃນການດຳເນີນແຕ່ລະກິດຈະກຳ.

*ຫຼັກການທີ 9 ການຄຸ້ມຄອງປ່າທີ່ມີຄຸນຄ່າສູງທາງດ້ານອະນຸລັກ*

ບັນດາກິດຈະກຳໃນການຄຸ້ມຄອງປ່າໄມ້ທີ່ມີຄຸນຄ່າສູງທາງດ້ານການອະນຸລັກຕ້ອງໄດ້ເສີມຂະຫຍາຍ ແລະ ດຳເນີນ ຢ່າງຕໍ່ເນື່ອງ ແລະ ການຕັດສິນບັນຫາທຸກຢ່າງກ່ຽວກັບປ່າທີ່ມີຄຸນຄ່າສູງທາງດ້ານອະນຸລັກນີ້ຕ້ອງໄດ້ພິຈາລະນາ ດ້ວຍຄວາມຮອບຄອບ

*ຫຼັກການທີ 10. ການພັດທະນາການປູກໄມ້*

ການປູກໄມ້ ຕ້ອງມີການວາງແຜນການ ແລະ ການຄຸ້ມຄອງຈັດຕັ້ງປະຕິບັດໃຫ້ຖືກກັບຫຼັກການ. ການປູກໄມ້ຕ້ອງມີປະສິດທິຜົນ ແລະ ສາມາດຕອບສະໜອງຄວາມຕ້ອງການດ້ານໄມ້ ພ້ອມນີ້ ການປູກໄມ້ ຕ້ອງປະກອບສ່ວນເຂົ້າໃນການຫຼຸດຜ່ອນການນຳໃຊ້ປ່າໄມ້ຈາກທຳມະຊາດ ແລະ ທັງເປັນການຟື້ນຟູບູລະນະປ່າຄືນໃໝ່ອີກດ້ວຍ.

## ໝວດທີ III

### ວ່າດ້ວຍລະບອບແບບແຜນວິທີເຮັດວຽກ

ມາດຕາ 4. ລະບອບແບບແຜນ ວິທີເຮັດວຽກຂອງ ການຈັດຕັ້ງ ຄຸ້ມຄອງການຢັ້ງຢືນປ່າໄມ້ມີດັ່ງນີ້:

4.1. ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ມີການແບ່ງງານ ແລະ ມອບໝາຍຄວາມຮັບຜິດຊອບຢູ່ໃນແຕ່ລະຂັ້ນການຈັດຕັ້ງໃຫ້ລະອຽດ,ຈະແຈ້ງ ຕາມການຊີ້ນຳຂອງພະແນກຄຸ້ມຄອງປ່າຜະລິດ ແລະ ທຸລະກິດໄມ້, ກົມປ່າໄມ້;

4.2. ມີການປະຊຸມ,ປຶກສາຫາລືແບບມີສ່ວນຮ່ວມຂອງຫຼາຍພາກສ່ວນຢ່າງຈະແຈ້ງ, ຕິດຕາມກວດກາ,ຖອດຖອນບົດຮຽນລາຍງານລ່ອງແສງໃຫ້ການຈັດຕັ້ງຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;

4.3. ຕິດຕໍ່ພົວພັນ, ປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ແຜນຄຸ້ມຄອງຊັບພະຍາກອນປ່າໄມ້ແບບຍືນນານ ແລະ ຢັ້ງຢືນປ່າໄມ້ໃຫ້ບັນລຸຜົນສຳເລັດ.

## ໝວດທີ V

### ວ່າດ້ວຍບັນຍັດສຸດທ້າຍ

ມາດຕາ 5. ມອບໃຫ້ພະແນກຄຸ້ມຄອງປ່າຜະລິດ ແລະ ທຸລະກິດໄມ້ ສົມທົບກັບ ຂະແໜງປ່າໄມ້ແຂວງ ທີ່ໄດ້ຮັບການຢັ້ງຢືນປ່າໄມ້ ເປັນຜູ້ຜັນຂະຫຍາຍ, ຈັດຕັ້ງປະຕິບັດ ແລະ ລາຍງານຜົນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ເປັນແຕ່ລະໄລຍະໃຫ້ຂັ້ນເທິງຊາບ.

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ແຕ່ມື້ລົງລາຍເຊັນຕົ້ນໄປ.

ຫົວໜ້າ ກົມປ່າໄມ້